ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ292/ລບ

ນະຄອນຫຼວງວຽງຈັນ, ວັນທີ 05.04.2021

# ດຳລັດ
# ວ່າດ້ວຍນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 8 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ ສະບັບເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015;
- ອີງຕາມ ໜັງສືສະເໜີ ຂອງ ກະຊວງພາຍໃນ ສະບັບເລກທີ 60/ພນ, ລົງວັນທີ 25 ກຸມພາ 2021.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາວຽກງານນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີຄວາມເປັນເອກະພາບ, ມີປະສິດທິພາບ ແລະ ມີປະສິດທິຜົນ ແນໃສ່ຊຸກຍູ້ ແລະ ສົ່ງເສີມໃຫ້ພະນັກງານ-ລັດຖະກອນ ມີຄວາມຕື່ນຕົວ ແລະ ຫ້າວຫັນ ໃນການປະຕິບັດໜ້າທີ່ວຽກງານຢູ່ເຂດດັ່ງກ່າວ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ, ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໃຫ້ດີຂຶ້ນ ແລະ ກ້າວໄປເຖິງການຫຼຸດຜ່ອນຄວາມທຸກຍາກ ເທື່ອລະກ້າວ.

### ມາດຕາ 2 ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ

ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ແມ່ນ ບ້ານທີ່ຕັ້ງ ຢູ່ຫ່າງໄກຈາກໃຈກາງ ທາງດ້ານການເມືອງ, ແຂວງ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ການບໍລິການຂອງເມືອງ ແຕ່ ຊາວ ກິໂລແມັດ ຂຶ້ນໄປ,. ຂອງແຂວງແຕ່ 100 ກິໂລແມັດ ຂຶ້ນໄປ, ການພັດທະນາ ພື້ນຖານໂຄງລ່າງ, ວັດຖຸເຕັກນິກ, ເສດຖະກິດ, ວັດທະນະທຳ-ສັງຄົມ ຍັງຈຳກັດ, ການດຳລົງຊີວິດຂອງປະຊາຊົນຍັງອີງໃສ່ທຳມະຊາດ, ຍັງນັບຖືຮີດຄອງປະເພນີທີ່ຫຼ້າຫຼັງ, ມີຄວາມຫຍຸ້ງຍາກໃນການສື່ສານດ້ານພາສາ ທັງເປັນເຂດທີ່ເຂົ້າເຖິງຍາກ ຍ້ອນພູມສັນຖານ, ບໍ່ມີເສັ້ນທາງລົດເຂົ້າເຖິງ, ມີຄວາມສ່ຽງສູງ ຫຼື ມັກເກີດໄພທຳມະຊາດ, ພະຍາດລະບາດ, ມີຜົນກະທົບຕໍ່ຊີວິດ ແລະ ຊັບສິນຂອງປະຊາຊົນ.

ມາດຕາ 3 ຫຼັກການກ່ຽວກັບວຽກງານນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ

ການປະຕິບັດວຽກງານນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ລັດຖະທໍາມະນູນ ແລະ ກົດໝາຍ;

2. ລວມສູນປະຊາທິປະໄຕ, ຕິກລົງເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ ແລະ ມີການແບ່ງຂັ້ນຄຸ້ມຄອງຈະແຈ້ງ;

3. ລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ, ມີຄວາມສະເໝີພາບ, ຍຸຕິທໍາ, ໂປ່ງໃສ ແລະ ສາມາດກວດສອບໄດ້;

4. ສອດຄ່ອງກັບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;

5. ຮັບປະກັນໄດ້ ຜົນປະໂຫຍດຂອງພະນັກງານ-ລັດຖະກອນທີ່ປະຈໍາການ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ.

6. ການຈັດຕັ້ງປະຕິບັດນະໂຍບາຍ ຕາມການປ່ຽນແປງມູນຄ່າດັດສະນີ ໃນແຕ່ລະໄລຍະ ແມ່ນບົນພື້ນຖານການຄົ້ນຄວ້າພິຈາລະນາຕົກລົງ ຂອງກະຊວງພາຍໃນ ໂດຍສົມທົບກັບພາກສ່ວນກ່ຽວຂ້ອງ ແລ້ວລາຍງານລັດຖະບານ.

ມາດຕາ 4 ຂອບເຂດການນໍາໃຊ້

ດໍາລັດສະບັບນີ້ ນໍາໃຊ້ສະເພາະ ການປະຕິບັດນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ຢູ່ ສປປ ລາວ.

## ໝວດທີ 2
## ລະດັບ, ຕົວຊີ້ວັດ
## ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ

ມາດຕາ 5 ລະດັບເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ

ລະດັບເຂດຫ່າງໄກສອກຫຼີກ ແລະ ທຸລະກັນດານ ມີ ດັ່ງນີ້:

1. ລະດັບໜຶ່ງ;
2. ລະດັບສອງ;
3. ລະດັບສາມ.

ມາດຕາ 6 ຕົວຊີ້ວັດ ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ

ຕົວຊີ້ວັດ ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ມີ ດັ່ງນີ້:

1. ດ້ານພູມສັນຖານ ແລະ ເງື່ອນໄຂທໍາມະຊາດ;
2. ດ້ານພື້ນຖານໂຄງລ່າງ;
3. ດ້ານການສຶກສາ ແລະ ສາທາລະນະສຸກ;
4. ດ້ານການດໍາລົງຊີວິດ ແລະ ສະພາບແວດລ້ອມ.

ມາດຕາ 7 ຕົວຊີ້ວັດ ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ລະດັບໜຶ່ງ

ຕົວຊີ້ວັດ ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ລະດັບໜຶ່ງ ມີ ດັ່ງນີ້:

1. ດ້ານພູມສັນຖານ ແລະ ເງື່ອນໄຂທໍາມະຊາດ:

1.1 ເປັນບ້ານ ທີ່ຕັ້ງຢູ່ພື້ນທີ່ພູດອຍ ມີຄວາມຫຍຸ້ງຍາກພິເສດ ໃນການເຂົ້າເຖິງ, ຫ່າງໄກຈາກໃຈກາງ ທາງດ້ານການເມືອງ, ເສດຖະກິດ, ວັດທະນະທໍາ-ສັງຄົມ ຂອງເມືອງໃດໜຶ່ງ ແຕ່ ຫ້າສິບ ກິໂລແມັດ ຂຶ້ນໄປ ແລະ ຂອງແຂວງ ແຕ່ 121 ກິໂລແມັດ ຂຶ້ນໄປ;

1.2 ເປັນເຂດທີ່ດິນຟ້າອາກາດບໍ່ເອື້ອອໍານວຍ, ມັກເກີດໄພທໍາມະຊາດເລື້ອຍໆ ຊຶ່ງເປັນຜົນກະທົບຕໍ່ການຜະລິດ ແລະ ການດໍາລົງຊີວິດ.

2. ດ້ານພື້ນຖານໂຄງລ່າງ:

2.1 ເປັນເຂດທີ່ບໍ່ມີເສັ້ນທາງລົດເຂົ້າເຖິງ ຊຶ່ງມີຄວາມຫຍຸ້ງຍາກໃນການເດີນທາງ ໂດຍອາໄສການຍ່າງ ຫຼື ນໍາໃຊ້ສັດ, ເຮືອ, ແພ ແລະ ອື່ນໆ;

2.2 ເປັນເຂດທີ່ບໍ່ມີລະບົບໄຟຟ້າ, ນໍ້າສະອາດ ແລະ ບໍ່ມີລະບົບໄປສະນີ, ໂທລະຄົມມະນາຄົມ;

2.3 ເປັນເຂດທີ່ບໍ່ມີຕະຫຼາດ.

3. ດ້ານການສຶກສາ ແລະ ສາທາລະນະສຸກ:

3.1 ການສຶກສາຂັ້ນພື້ນຖານ ຍັງບໍ່ທັນໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວ, ໂຮງຮຽນບໍ່ໄດ້ມາດຕະຖານ ຫຼື ບໍ່ມີໂຮງຮຽນ, ເດັກໃນເກນອາຍຸຮຽນທີ່ບໍ່ໄດ້ເຂົ້າຮຽນ ກວມອັດຕາສ່ວນຫຼາຍກວ່າ ຫ້າສິບສ່ວນຮ້ອຍ (50%);

3.2 ການບໍລິການທາງດ້ານສາທາລະນະສຸກຍັງຈໍາກັດ ຊຶ່ງມີພຽງແຕ່ຖົງຢາປະຈໍາບ້ານ ເທົ່ານັ້ນ.

4. ດ້ານການດໍາລົງຊີວິດ ແລະ ສະພາບແວດລ້ອມ:

4.1 ເປັນເຂດທີ່ມີການດໍາລົງຊີວິດ ໂດຍອາໄສທໍາມະຊາດເປັນສ່ວນໃຫຍ່;

4.2 ເປັນເຂດຊົນເຜົ່າ ທີ່ມີຄວາມຫຍຸ້ງຍາກໃນການສື່ສານ, ປາກເວົ້າ ແລະ ການພົວພັນຊຶ່ງກັນ ແລະ ກັນ;

4.3 ເປັນເຂດມັກເກີດພະຍາດລະບາດ, ເງື່ອນໄຂສະພາບແວດລ້ອມ ບໍ່ອໍານວຍຄວາມສະດວກ ຊຶ່ງມີຜົນກະທົບຕໍ່ສຸຂະພາບ, ມີຄວາມສ່ຽງຕໍ່ການດໍາລົງຊີວິດ ແລະ ການປະຕິບັດວຽກງານ.

### ມາດຕາ 8 ຕົວຊີ້ວັດ ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ລະດັບສອງ

ຕົວຊີ້ວັດ ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ລະດັບສອງ ມີ ດັ່ງນີ້:

1. ດ້ານພູມສັນຖານ ແລະ ເງື່ອນໄຂທໍາມະຊາດ:

1.1 ເປັນບ້ານ ທີ່ຕັ້ງຢູ່ພື້ນທີ່ພູດອຍ ຫຼື ພູພຽງ ທີ່ມີຄວາມຫຍຸ້ງຍາກ ແລະ ຫ່າງໄກຈາກໃຈກາງ ທາງດ້ານການເມືອງ, ເສດຖະກິດ, ວັດທະນະທໍາ-ສັງຄົມ ຂອງເມືອງໃດໜຶ່ງ ແຕ່ ສາມສິບ ກິໂລແມັດ ຂຶ້ນໄປ ແລະ ຂອງແຂວງ ແຕ່ 101 ຫາ 120 ກິໂລແມັດ;

1.2 ເປັນເຂດທີ່ສະພາບແວດລ້ອມ ທໍາມະຊາດ, ດິນຟ້າອາກາດ ບໍ່ເອື້ອອໍານວຍໃຫ້ແກ່ການຜະລິດ ແລະ ການດໍາລົງຊີວິດ.

2. ດ້ານພື້ນຖານໂຄງລ່າງ

2.1 ມີເສັ້ນທາງລົດ ແຕ່ການເດີນທາງມີຄວາມຫຍຸ້ງຍາກ, ລົດສາມາດໄປຮອດແຕ່ບາງບ່ອນ ຫຼື ບາງເຂດໃນລະດູດຽວ ແລະ ຍັງອາໄສການຍ່າງ ຫຼື ນໍາໃຊ້ສັດ, ເຮືອ, ແພ ແລະ ອື່ນໆ;

2.2 ເປັນເຂດທີ່ບໍ່ມີລະບົບໄຟຟ້າ, ນໍ້າສະອາດ ແລະ ມີລະບົບໄປສະນີ, ໂທລະຄົມມະນາຄົມທີ່ຍັງບໍ່ທັນທົ່ວເຖິງ;

2.3 ມີຕະຫຼາດແບບປະຖົມປະຖານ.

3. ດ້ານການສຶກສາ ແລະ ສາທາລະນະສຸກ:

3.1 ການສຶກສາຂັ້ນພື້ນຖານຍັງບໍ່ທັນໄດ້ຮັບການພັດທະນາເທົ່າທີ່ຄວນ, ໂຮງຮຽນບໍ່ໄດ້ມາດຕະຖານ, ເດັກໃນເກນອາຍຸຮຽນບໍ່ໄດ້ເຂົ້າຮຽນ ກວມອັດຕາສ່ວນ ສີ່ສິບ ສ່ວນຮ້ອຍ (40%) ຂຶ້ນໄປ;

3.2 ການບໍລິການທາງດ້ານສາທາລະນະສຸກ ມີພຽງໂຮງໝໍນ້ອຍ ແລະ ຍັງຂາດເຂີນຊັບພະຍາກອນຫຼາຍດ້ານ.

4. ດ້ານການດໍາລົງຊີວິດ ແລະ ສະພາບແວດລ້ອມ:

4.1 ເປັນເຂດທີ່ມີການດໍາລົງຊີວິດ ໂດຍອາໄສທໍາມະຊາດເປັນບາງເຂດ, ບາງບ່ອນ;

4.2 ເປັນເຂດຊົນເຜົ່າ ທີ່ມີຄວາມຫຍຸ້ງຍາກໃນການສື່ສານ, ປາກເວົ້າ ແລະ ການພົວພັນຊຶ່ງກັນ ແລະ ກັນຢູ່ບາງເຂດ;

4.3 ເປັນເຂດມັກເກີດພະຍາດລະບາດ, ເງື່ອນໄຂສະພາບແວດລ້ອມ ບໍ່ເອື້ອອໍານວຍຄວາມສະດວກ ຊຶ່ງມີຜົນກະທົບ ຕໍ່ສຸຂະພາບ, ມີຄວາມສ່ຽງຕໍ່ການດໍາລົງຊີວິດ ແລະ ການປະຕິບັດວຽກງານ.

**ມາດຕາ 9 ຕົວຊີ້ວັດເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ລະດັບສາມ**

ຕົວຊີ້ວັດເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ລະດັບສາມ ມີ ດັ່ງນີ້:

1. ດ້ານພູມສັນຖານ ແລະ ເງື່ອນໄຂທຳມະຊາດ:

1.1 ເປັນບ້ານທີ່ຕັ້ງຢູ່ ພື້ນທີ່ພູດອຍ, ພູພຽງ ຫຼື ທົ່ງພຽງ, ຫ່າງໄກຈາກໃຈກາງ ທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ຂອງເມືອງໃດໜຶ່ງ ແຕ່ ຊາວ ກິໂລແມັດ ຂຶ້ນໄປ ແລະ ຂອງແຂວງ 100 ກິໂລແມັດ;

1.2 ເປັນເຂດທີ່ສະພາບແວດລ້ອມ ທຳມະຊາດ, ດິນຟ້າອາກາດ ບໍ່ເອື້ອອຳນວຍໃຫ້ແກ່ການຜະລິດ ແລະ ການດຳລົງຊີວິດ.

2. ດ້ານພື້ນຖານໂຄງລ່າງ:

2.1 ມີເສັ້ນທາງລົດ ແລະ ໄດ້ຮັບການພັດທະນາໃນລະດັບໃດໜຶ່ງ ແຕ່ການເດີນທາງຍັງມີຄວາມຫຍຸ້ງຍາກໃນລະດູຝົນ;

2.2 ເປັນເຂດທີ່ມີລະບົບໄຟຟ້າ, ມີລະບົບນ້ຳສະອາດຢູ່ບາງເຂດ ແຕ່ຍັງບໍ່ສະດວກໃນການນຳໃຊ້ ແລະ ມີລະບົບໄປສະນີ, ໂທລະຄົມມະນາຄົມ ແຕ່ຍັງບໍ່ສະດວກໃນການນຳໃຊ້;

2.3 ມີຕະຫຼາດ ແຕ່ຍັງບໍ່ທັນຖາວອນ.

3. ດ້ານການສຶກສາ ແລະ ສາທາລະນະສຸກ:

3.1 ການສຶກສາຂັ້ນພື້ນຖານ ໄດ້ຮັບການພັດທະນາ ຢູ່ເຂດຕົວເມືອງ ແລະ ເຂດໃກ້ຄຽງ, ສ່ວນເຂດນອກຍັງບໍ່ທັນໄດ້ຮັບການພັດທະນາ ເທົ່າທີ່ຄວນ, ເດັກໃນເກນອາຍຸຮຽນບໍ່ໄດ້ເຂົ້າຮຽນຍັງກວມອັດຕາສ່ວນ ສາມສິບສ່ວນຮ້ອຍ (30%) ຂຶ້ນໄປ;

3.2 ການບໍລິການທາງດ້ານສາທາລະນະສຸກໄດ້ຮັບການພັດທະນາໂດຍພື້ນຖານ, ມີໂຮງໝໍນ້ອຍ ແຕ່ຍັງຂາດເຂີນຊັບພະຍາກອນຫຼາຍດ້ານ.

4. ດ້ານການດຳລົງຊີວິດ ແລະ ສະພາບແວດລ້ອມ

4.1 ເປັນເຂດທີ່ມີການດຳລົງຊີວິດ ໂດຍອາໄສທຳມະຊາດເປັນບາງເຂດບາງບ່ອນ;

4.2 ເປັນເຂດທີ່ຍັງມີສະພາບແວດລ້ອມ ບໍ່ເອື້ອອຳນວຍຄວາມສະດວກບາງດ້ານ ຊຶ່ງມີຜົນກະທົບຕໍ່ການພັດທະນາ ແລະ ການດຳລົງຊີວິດ.

## ໝວດທີ 3
## ການປະເມີນເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ

**ມາດຕາ 10 ການປະເມີນ**

ການປະເມີນເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ແມ່ນການກວດກາ, ຕີລາຄາຄືນ ເຂດບ້ານລະດັບໜຶ່ງ, ລະດັບສອງ ແລະ ລະດັບສາມ ເພື່ອພິຈາລະນາຮັບຮອງ, ຄົງລົງເຂດ ແຕ່ລະ ລະດັບ ຫຼື ຫຼຸດພົ້ນອອກຈາກເຂດ ຫ່າງໄກ ສອກຫຼີກ ແລະ ທຸລະກັນດານ.

ການປະເມີນເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ໃຫ້ດຳເນີນໄປທຸກໆ ສອງປີ ຫົກເດືອນພ້ອມທັງສະຫຼຸບລາຍງານຂັ້ນເທິງ ຢ່າງປົກກະຕິ.

**ມາດຕາ 11 ເປົ້າໝາຍການປະເມີນ**

ເປັນບ້ານທີ່ໄດ້ຈັດລະດັບເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ເຂດບ້ານ ລະດັບໜຶ່ງ, ລະດັບສອງ ແລະ ລະດັບສາມ ເພື່ອເປັນບ່ອນອີງໃນການປະຕິບັດນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ຜູ້ທີ່ປະຕິບັດໜ້າທີ່ວຽກງານຢູ່ເຂດດັ່ງກ່າວ.

**ມາດຕາ 12 ຄະນະຮັບຜິດຊອບການປະເມີນ**

ຄະນະຮັບຜິດຊອບການປະເມີນປະກອບມີຄະນະຮັບຂັ້ນແຂວງ ແລະ ຂັ້ນເມືອງ ດັ່ງນີ້:

1. ຄະນະຮັບຜິດຊອບຂັ້ນແຂວງ ປະກອບມີ:

1) ຮອງເຈົ້າແຂວງ ຜູ້ຊີ້ນຳວຽກງານພະແນກພາຍໃນ ເປັນຫົວໜ້າ;
2) ຫົວໜ້າພະແນກພາຍໃນ ເປັນຮອງ;
3) ຫົວໜ້າຫ້ອງວ່າການແຂວງ ເປັນຮອງ;
4) ຫົວໜ້າພະແນກແຜນການ ແລະ ການລົງທຶນ ເປັນຄະນະ;
5) ຫົວໜ້າພະແນກການເງິນ ເປັນຄະນະ;
6) ຫົວໜ້າພະແນກສຶກສາທິການ ແລະ ກິລາ ເປັນຄະນະ;
7) ຫົວໜ້າພະແນກສາທາລະນະສຸກ ເປັນຄະນະ;
8) ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ເປັນຄະນະ;
9) ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ເປັນຄະນະ;
10) ກອງເລຂາຊ່ວຍວຽກຈາກພາກສ່ວນກ່ຽວຂ້ອງຈຳນວນໜຶ່ງ.

2. ຄະນະຮັບຜິດຊອບຂັ້ນເມືອງປະກອບມີ ດັ່ງນີ້:
1) ເຈົ້າເມືອງ ເປັນຫົວໜ້າ;
2) ຫົວໜ້າຫ້ອງການພາຍໃນ ເປັນຮອງ;
3) ຫົວໜ້າຫ້ອງວ່າການເມືອງ ເປັນຮອງ;
4) ຫົວໜ້າຫ້ອງການແຜນການ ແລະ ການລົງທຶນ ເປັນຄະນະ;
5) ຫົວໜ້າຫ້ອງການ ການເງິນ ເປັນຄະນະ;
6) ຫົວໜ້າຫ້ອງການສຶກສາທິການ ແລະ ກິລາ ເປັນຄະນະ;
7) ຫົວໜ້າຫ້ອງການສາທາລະນະສຸກ ເປັນຄະນະ;
8) ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ ເປັນຄະນະ;
9) ຫົວໜ້າຫ້ອງການໂຍທາທິການ ແລະ ຂົນສົ່ງ ເປັນຄະນະ;
10) ກອງເລຂາຊ່ວຍວຽກຈາກພາກສ່ວນກ່ຽວຂ້ອງຈຳນວນໜຶ່ງ

## ໝວດທີ 4
## ການປະຕິບັດ ແລະ ການສິ້ນສຸດ ນະໂຍບາຍ

**ມາດຕາ 13 ການປະຕິບັດນະໂຍບາຍ**

ລັດຖະບານ ມອບໃຫ້ກະຊວງພາຍໃນເປັນໃຈກາງໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າພິຈາລະນາ ກ່ຽວກັບການປະຕິບັດນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ບົນພື້ນຖານການສະເໜີຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພາຍຫຼັງທີ່ສະພາປະຊາຊົນ ແຂວງ, ນະຄອນຫຼວງ ໄດ້ຮັບຮອງ ເປັນເຂດຫ່າງໄກ ສອກຫຼີກ ແລະ ທຸລະ ກັນດານ.

**ມາດຕາ 14 ນະໂຍບາຍ ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ລະດັບໜຶ່ງ**

1. ໄດ້ຮັບການອຸດໜູນເພີ່ມ ສາມສິບ ສ່ວນຮ້ອຍ (30%) ຕໍ່ເດືອນ ຂອງເງິນເດືອນພື້ນຖານ;
2. ໄດ້ຮັບບຸລິມະສິດໃນການພິຈາລະນາ ກ່ຽວກັບການບຳລຸງ, ກໍ່ສ້າງ, ຍົກລະດັບວິຊາສະເພາະ ຫຼື ລະດັບທິດສະດີການເມືອງ ຕາມເງື່ອນໄຂທີ່ເໝາະສົມ;
3. ໄດ້ຮັບການຍ້ອງຍໍຈາກການຈັດຕັ້ງຂັ້ນຕ່າງໆ ຕາມຄວາມເໝາະສົມ ບົນພື້ນຖານການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ.

**ມາດຕາ 15 ນະໂຍບາຍ ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ລະດັບສອງ**

1. ໄດ້ຮັບການອຸດໜູນເພີ່ມ ຊາວຫ້າ ສ່ວນຮ້ອຍ (25%) ຕໍ່ເດືອນ ຂອງເງິນເດືອນພື້ນຖານ;

2. ໄດ້ຮັບບຸລິມະສິດໃນການພິຈາລະນາ ກ່ຽວກັບການບຳລຸງ, ກໍ່ສ້າງ, ຍົກລະດັບວິຊາສະເພາະ ຫຼື ລະດັບທິດສະດີການເມືອງ ຕາມເງື່ອນໄຂທີ່ເໝາະສົມ;
3. ໄດ້ຮັບການຍ້ອງຍໍຈາກການຈັດຕັ້ງຂັ້ນຕ່າງໆ ຕາມຄວາມເໝາະສົມຂັ້ນພື້ນຖານ ການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ.

**ມາດຕາ 16 ນະໂຍບາຍ ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ລະດັບສາມ**

1. ໄດ້ຮັບການອຸດໜູນເພີ່ມ ຊາວ ສ່ວນຮ້ອຍ (20%) ຕໍ່ເດືອນ ຂອງເງິນເດືອນພື້ນຖານ;
2. ໄດ້ຮັບບຸລິມະສິດໃນການພິຈາລະນາ ກ່ຽວກັບການບຳລຸງ, ກໍ່ສ້າງ, ຍົກລະດັບວິຊາສະເພາະ ຫຼື ລະດັບທິດສະດີການເມືອງ ຕາມເງື່ອນໄຂທີ່ເໝາະສົມ;
3. ໄດ້ຮັບການຍ້ອງຍໍຈາກການຈັດຕັ້ງຂັ້ນຕ່າງໆ ຕາມຄວາມເໝາະສົມ ບົນພື້ນຖານການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ.

**ມາດຕາ 17 ນະໂຍບາຍ ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ແບບມີກຳນົດ**

ສຳລັບພະນັກງານ-ລັດຖະກອນ ຜູ້ໄດ້ຮັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ ໃຫ້ໄປປະຕິບັດວຽກງານ ຢູ່ເຂດຫ່າງໄກສອກຫຼີກ ແລະ ທຸລະກັນດານ ແບບມີກຳນົດ ສິບສອງ ເດືອນ ຂຶ້ນໄປ ໄດ້ຮັບເງິນອຸດໜູນ ຈຳນວນສອງເທົ່າ ຂອງເງິນເດືອນພື້ນຖານ ໃນເດືອນທຳອິດ ເພື່ອຊື້ວັດຖຸ, ສິ່ງຂອງ ທີ່ຈຳເປັນກ່ອນໄປປະຈຳການ.

**ມາດຕາ 18 ການສິ້ນສຸດການປະຕິບັດນະໂຍບາຍ**

ການປະຕິບັດນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ຈະສິ້ນສຸດລົງໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຍົກຍ້າຍອອກຈາກເຂດຫ່າງໄກສອກຫຼີກ ແລະ ທຸລະກັນດານ;
2. ສິ້ນສຸດການເປັນພະນັກງານ-ລັດຖະກອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

## ໝວດທີ 5
## ການຄຸ້ມຄອງ ແລະ ການກວດກາ

**ມາດຕາ 19 ອົງການຄຸ້ມຄອງ ແລະ ກວດກາວຽກງານນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ**

ລັດຖະບານ ເປັນຜູ້ຄຸ້ມຄອງ ແລະ ກວດກາ ວຽກງານນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ກະຊວງພາຍໃນ ສົມທົບກັບ ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງເປັນເຈົ້າການຮັບຜິດຊອບໂດຍກົງ ໂດຍມີການປະສານສົມທົບກັບຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 20 ສິດ ແລະ ໜ້າທີ່ ຂອງກະຊວງພາຍໃນ**

ກະຊວງພາຍໃນມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ຄົ້ນຄວ້າສ້າງນະໂຍບາຍ, ແຜນຍຸດທະສາດ, ລະບຽບການ, ແຜນງານ, ໂຄງການກ່ຽວກັບນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ເພື່ອສະເໜີຂັ້ນເທິງພິຈາລະນາ;

2. ໂຄສະນາເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນງານ, ໂຄງການກ່ຽວກັບວຽກງານນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ;

3. ຕິດຕາມ, ຊຸກຍູ້ ແລະ ກວດກາ ການຈັດຕັ້ງປະຕິບັດນະໂຍບາຍ ແລະ ການປະເມີນເຂດໃນແຕ່ລະໄລຍະ;

4. ປະສານສົມທົບກັບອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ສຳຫຼວດ, ເກັບກຳ ແລະ ລາຍງານ ຜົນຂອງການປະເມີນ ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ເພື່ອລາຍງານລັດຖະບານຊາບ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 21 ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ**

ໃນການຄຸ້ມຄອງ ວຽກງານນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ກະຊວງ, ອົງການລັດທຽບເທົ່າກະຊວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ໂຄສະນາເຜີຍແຜ່, ເຊື່ອມຊຶມນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ;

2. ປະສານສົມທົບກັບບັນດາກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ;

3. ສ້າງແຜນການລະອຽດໃນການຈັດວາງ, ບັນຈຸ, ສັບຊ້ອນ ແລະ ຂຶ້ນບັນຊີຈຳນວນ ພະນັກງານ-ລັດຖະກອນ ໃນແຕ່ລະຂະແໜງການ ແລະ ຂົງເຂດວຽກງານ ທີ່ປະຈຳການປົກກະຕິ ແລະ ໄປປະຕິບັດໜ້າທີ່ແບບມີກຳນົດ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ເພື່ອລາຍງານ ຕໍ່ກະຊວງການເງິນ ແລະ ກະຊວງພາຍໃນ;

4. ປະສານສົມທົບກັບອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຈັດວາງ, ນຳໃຊ້, ຕິດຕາມ, ຊຸກຍູ້ ແລະ ອຳນວຍຄວາມສະດວກ ໃຫ້ແກ່ພະນັກງານ-ລັດຖະກອນຂອງຕົນ ທີ່ປະຈຳການປົກກະຕິ ແລະ ໄປປະຕິບັດໜ້າທີ່ແບບມີກຳນົດ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ;

5. ຕິດຕາມການເບີກຈ່າຍເງິນເດືອນ, ເງິນອຸດໜູນ ແລະ ນະໂຍບາຍຕ່າງໆ ຕໍ່ພະນັກງານ-ລັດຖະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ທີ່ປະຈຳການຢູ່ໃນເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ໃຫ້ຖືກຕ້ອງ ແລະ ທັນເວລາ;

6. ຕິດຕາມ, ຊຸກຍູ້ ແລະ ສັງລວມ ການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກສອກຫຼີກ ແລະ ທຸລະກັນດານ ເພື່ອລາຍງານກະຊວງພາຍໃນ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 22 ສິດ ແລະ ໜ້າທີ່ ຂອງອົງການປົກຄອງຂັ້ນແຂວງ**

ໃນການຄຸ້ມຄອງ ວຽກງານນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ອົງການປົກຄອງຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງເຜີຍແຜ່, ເຊື່ອມຊຶມນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ;

2. ເປັນເຈົ້າການ ຊຸກຍູ້, ຕິດຕາມ, ສຳຫຼວດ, ຕີລາຄາ, ກວດກາ ແລະ ກຳນົດ ເຂດຫ່າງໄກສອກຫຼີກ ແລະ ທຸລະກັນດານ ພາຍໃນແຂວງ, ນະຄອນຫຼວງ ເພື່ອສະເໜີສະພາປະຊາຊົນ ແຂວງ, ນະຄອນຫຼວງ ພິຈາລະນາ;

3. ຄົ້ນຄວ້າ ແລະ ພິຈາລະນາ ຕົກລົງ ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ບົນພື້ນຖານການຮັບຮອງ ຈາກສະພາປະຊາຊົນແຂວງ, ນະຄອນຫຼວງ ແລ້ວລາຍງານ ກະຊວງພາຍໃນ ຕາມລະບຽບການ;

4. ສັງລວມຄວາມຕ້ອງການ ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ແລ້ວປະສານສົມທົບກັບ ກະຊວງ, ອົງການລັດທຽບເທົ່າກະຊວງ ເພື່ອພິຈາລະນາ ບັນຈຸ, ສັບຊ້ອນ ພະນັກງານ-ລັດຖະກອນ ໄປປະຕິບັດໜ້າທີ່ ແບບປົກກະຕິ ແລະ ແບບມີກຳນົດ ຢູ່ເຂດດັ່ງກ່າວ;

5. ຂຶ້ນບັນຊີລະອຽດຈຳນວນພະນັກງານ-ລັດຖະກອນຂອງຕົນ ທີ່ປະຈຳການປົກກະຕິ ແລະ ໄປປະຕິບັດໜ້າທີ່ແບບມີກຳນົດ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ເພື່ອລາຍງານຂັ້ນເທິງ;

6. ສັງລວມແຜນງົບປະມານທີ່ອົງການປົກຄອງເມືອງສະເໜີ ເພື່ອປະເມີນ ແລະ ປະຕິບັດນະໂຍບາຍຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ;

7. ປະສານສົມທົບກັບອົງການປົກຄອງຂັ້ນເມືອງ ປະເມີນເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ສອງປີ ຫົກເດືອນ ຕໍ່ຄັ້ງ ເພື່ອສະຫຼຸບ ແລະ ຕີລາຄາ ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ທີ່ມີມາດຕະຖານ ແລະ ເງື່ອນໄຂ ຫຼຸດພົ້ນຈາກເຂດດັ່ງກ່າວ;

8. ສະເໜີສະພາປະຊາຊົນ ແຂວງ, ນະຄອນຫຼວງ ພິຈາລະນາ ຮັບຮອງ ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ພາຍໃນແຂວງ, ນະຄອນຫຼວງ;

9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ໃຫ້ກະຊວງພາຍໃນ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງອົງການປົກຄອງຂັ້ນເມືອງ**

ໃນການຄຸ້ມຄອງ ວຽກງານນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ອົງການປົກຄອງຂັ້ນເມືອງ ມີ ສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບ ຂອງຕົນ ດັ່ງນີ້:

1. ຈັດຕັ້ງເຜີຍແຜ່, ເຊື່ອມຊຶມນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ໃນທົ່ວເມືອງຕົນຢ່າງທົ່ວເຖິງ ແລະ ຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ;

2. ສຳຫຼວດ, ຕີລາຄາ, ກວດກາ ແລະ ກຳນົດເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ເພື່ອນຳສະເໜີອົງການປົກຄອງ ແຂວງ, ນະຄອນຫຼວງ ພິຈາລະນາ;

3. ສັງລວມຄວາມຕ້ອງການພະນັກງານ-ລັດຖະກອນວິຊາການຕ່າງໆ ທີ່ຈຳເປັນຢູ່ເມືອງຕົນ ເພື່ອສະເໜີຂັ້ນເທິງ ແລະ ສົມທົບກັບອົງການປົກຄອງຂັ້ນແຂວງ ໃນການຈັດວາງ, ບັນຈຸ ໃຫ້ມີຄວາມເໝາະສົມ ແລະ ຖືກຕ້ອງຕາມຄວາມຮູ້, ຄວາມສາມາດຂອງຜູ້ກ່ຽວ;

4. ຂຶ້ນແຜນງົບປະມານ ເພື່ອປະເມີນ ແລະ ປະຕິບັດນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ;

5. ປະສານສົມທົບກັບອົງການປົກຄອງບ້ານ ເພື່ອສະຫຼຸບ ແລະ ລາຍງານຜົນສຳເລັດ ຫຼື ຄວາມຄືບໜ້າຂອງການພັດທະນາຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເພື່ອລາຍງານຕໍ່ອົງການປົກຄອງ ແຂວງ, ນະຄອນຫຼວງ;

6. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານນະໂຍບາຍ ຕໍ່ ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ໃຫ້ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 24 ເນື້ອໃນການກວດກາ**

ເນື້ອໃນການກວດກາ ວຽກງານການປະຕິບັດນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ມີ ດັ່ງນີ້:

1. ການຈັດຕັ້ງປະຕິບັດລະບຽບການ ກ່ຽວກັບວຽກງານນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ;

2. ການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ ແລະ ບຸກຄະລາກອນທີ່ກ່ຽວຂ້ອງກັບວຽກງານນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ;

3. ການປະຕິບັດແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ;

4. ການປະເມີນຜົນການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ກ່ຽວກັບວຽກງານນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ.

ມາດຕາ 25 ຮູບການກວດກາ

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດການອກແຜນ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາ ຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນກວດກາແບບຮີບດ່ວນ ໂດຍບໍ່ແຈ້ງໃຫ້ຜູ້ຖືກກວດກາ ຮູ້ລ່ວງໜ້າ.

ໃນການດຳເນີນການກວດກາວຽກງານປະຕິບັດນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

## ໝວດທີ 6
## ນະໂຍບາຍ ຕໍ່ຜູ້ມີຜົນງານ ແລະ ມາດຕະການ ຕໍ່ຜູ້ລະເມີດ

ມາດຕາ 26 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

ມາດຕາ 27 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

ມາດຕາ 28 ການຈັດຕັ້ງປະຕິບັດ

ມອບໃຫ້ກະຊວງພາຍໃນ ເປັນເຈົ້າການປະສານສົມທົບ ກັບກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດດຳລັດສະບັບນີ້.

ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 29 ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດພາຍຫຼັງໄດ້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ດຳລັດສະບັບນີ້ ປ່ຽນແທນດຳລັດວ່າດ້ວຍການກຳນົດນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ຢູ່ເຂດຫ່າງໄກ ສອກຫຼີກ ແລະ ທຸລະກັນດານ ສະບັບເລກທີ 468/ນຍ, ລົງວັນທີ 10 ພະຈິກ 2010.

ຕາງໜ້າ ລັດຖະບານແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ